# Law on Investment Promotion

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 1

## General knowledge in investment and promotion in Lao PDR

## ຄວາມຮັບຮູ້ທົ່ວໄປກ່ຽວກັບການລົງທຶນ ແລະ ການສົ່ງເສີມການລົງທຶນ ຂອງ ສປປ ລາວ

### 1. ນິຍາມກ່ຽວກັບການລົງທຶນ

ຄຳວ່າ: ການລົງທຶນ ມີຜູ້ທີ່ນຳໄປໃຊ້ໃນຄວາມໝາຍທີ່ແຕກຕ່າງກັນໄປເຊັ່ນ: ບາງຄົນສະສົມທຶນ ເພື່ອໄປລົງທຶນ ເພື່ອໄປຜ່ອນຊື້ທີ່ດິນໄວ້ປຸກເຮືອນເປັນຂອງຕົນເອງໃນອະນາຄົດ, ພໍ່ຄ້າລົງທຶນຊື້ເຄື່ອງຂອງມາຂາຍ, ຜູ້ລົງທຶນຊື້ທີ່ດິນເພື່ອສ້າງໂຮງງານອຸດສາຫະກຳຜະລິດສິນຄ້າອອກມາຂາຍ, ຊາວນາລົງທຶນຊື້ປຸ໋ຍ ແລະ ແນວພັນເຂົ້າ ເພື່ອທຳການກະສິກຳແຕ່ລະປີ, ລັດຖະບານລົງທຶນໃນການສ້າງ ແລະ ປົວແປງເສັ້ນທາງເປັນຕົ້ນ. ໂດຍທົ່ວໄປແລ້ວການລົງ ທຶນມັກຈະໝາຍເຖິງ: ການນຳເງິນອອກ ຫຼື ເງິນທີ່ສະສົມໄວ້ ຫຼື ເງິນກູ້ຢືມຈາກສະຖາບັນການເງິນໄປຊື້ເຄື່ອງມື, ເຄື່ອງຈັກ, ທີ່ດິນ ຫຼື ຊັບສິນຕ່າງໆເຊັ່ນ: ຫຼັກຊັບ ເພື່ອກໍ່ໃຫ້ເກີດຜົນຕອບແທນ, ອາດຈະຢູ່ໃນຮູບຂອງຜົນກຳໄລດ້ວຍອັດຕາດອກເບ້ຽ ຫຼື ເງິນປັນຜົນສຸດແລ້ວແຕ່ປະເພດການລົງທຶນນັ້ນໆ.

ການລົງທຶນແມ່ນການນຳເອົາທຶນທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ເພື່ອມາປະກອບໃສ່ຫົວໜ່ວຍທຸລະກິດໂດຍ ເປົ້າໝາຍຄືຜົນກຳໄລ.

"ການລົງທຶນແມ່ນການນຳເອົາທຶນສະສົມໄວ້ ຫຼື ເງິນກູ້ຢືມຈາກສະຖາບັນການເງິນເພື່ອນຳເອົາໄປຊື້ເຄື່ອງມື, ເຄື່ອງຈັກ, ວັດຖຸອຸປະກອນຕ່າງໆທີ່ເອີ້ນວ່າປັດໃຈການລົງທຶນ ເພື່ອນຳໃຊ້ເຂົ້າໃນການດຳເນີນທຸລະກິດ, ຊຶ່ງ ອາດຈະຢູ່ໃນຮູບແບບການຜະລິດສິນຄ້າ ແລະ ການບໍລິການຕ່າງໆ ຊຶ່ງຜູ້ລົງທຶນ ຫຼື ນັກລົງທຶນຫວັງຈະໄດ້ຮັບຜົນຜະໂຫຍດກໍ່ຄືຜົນຕອບແທນຈາກການລົງທຶນດ້ວຍຮູບແບບຂອງກຳໄລ, ເງິນປັນຜົນ ຊຶ່ງທັງໝົດເຫຼົ່ານີ້ແມ່ນຂຶ້ນກັບປະເພດຂອງທຸລະກິດ ຫຼື ການລົງທຶນເອງ"[1].

ການລົງທຶນຢູ່ໃນ ສປປ ລາວ ສາມາດແບ່ງອອກເປັນຫຼາຍແບບຄື: ການລົງທຶນທາງດ້ານຊັບສິນທີ່ເປັນສັງຫາລິມະຊັບ ແລະ ອະສັງຫາລິມະຊັບ ແລະ ການລົງທຶນທາງດ້ານຊັບສິນທາງປັນຍາ.

ການລົງທຶນທາງດ້ານຊັບສິນທີ່ເປັນສັງຫາລິມະຊັບ ແລະ ອະສັງຫາລິມະຊັບໝາຍເຖິງການນຳເອົາວັດຖຸ, ເງິນ, ຄຳ , ທີ່ດິນ ແລະ ອື່ນໆ ເພື່ອມາປະກອບເປັນທຶນໃນການສ້າງຕັ້ງຫົວໜ່ວຍທຸລະກິດ.

ການລົງທຶນທາງດ້ານຊັບສິນທາງປັນຍາ ໝາຍເຖິງການນຳເອົາຄວາມຮູ້, ຄວາມສາມາດ, ເຄື່ອງໝາຍການຄ້າ ຫຼື ແຮງງານເພື່ອມາປະກອບເປັນທຶນເຂົ້າໃນຫົວໜ່ວຍທຸລະກິດໃດໜຶ່ງ.

ໃນການລົງທຶນທັງສອງຮູບການນີ້ແມ່ນມີ 2 ວິທີຄື: ການລົງທຶນໂດຍທາງກົງ ແລະ ການລົງທຶນໂດຍທາງອ້ອມ.

---

[1] (Francesco Abbatec, 2006)

ການລົງທຶນໂດຍກົງ: ແມ່ນການນຳເອົາຊັບມາປະກອບເຂົ້າ ໃນຫົວໜ່ວຍທຸລະກິດໂດຍກົງໃນເວລາສ້າງຕັ້ງ ການລົງທຶນໃນລັກສະນະນີ້ອາດຈະບໍລິຫານເອງ ຫຼື ໃຫ້ບຸກຄົນພາຍນອກບໍລິຫານແທນກໍ່ໄດ້.

ການລົງທຶນໂດຍທາງອ້ອມ: ໝາຍເຖິງການຊື້ພັນທະບັດ, ຊື້ຮຸ້ນ, ຊຶ່ງການລົງທຶນໃນລັກສະນະນີ້ຜູ້ລົງທຶນບໍ່ສາມາດເຂົ້າໄປບໍລິຫານຈັດການໄດ້ໂດຍກົງມີແຕ່ລໍຖ້າຮັບຜົນປະໂຫຍກຕາມສ່ວນແບ່ງ.

ສຳລັບການລົງທຶນຢູ່ໃນ ສປປ ລາວ ນີ້ສາມາດລົງທຶນໄດ້ຕາມຮູບແບບຕ່າງໆຕາມຄວາມສະໝັກໃຈຂອງຜູ້ປະກອບທຶນ ຫຼື ຕາມການກຳນົດໄວ້ໃນກົດໝາຍ, ສ່ວນຜູ້ລົງທຶນກົດໝາຍກໍ່ບໍ່ໄດ້ກຳນົດວ່າ: ຕ້ອງເປັນບຸກຄົນສັນຊາດໃດສັນຊາດໜຶ່ງໂດຍສະເພາະ, ມີແຕ່ກົດໝາຍໄດ້ກຳນົດບຸກຄົນທີ່ກົດໝາຍຫ້າມດຳເນີນທຸລະກິດເທົ່ານັ້ນ.

## 2. ຄວາມໝາຍ, ສຳຄັນຂອງການສົ່ງເສີມການລົງທຶນ

**+ ຄວາມໝາຍ:**

ໃນຄວາມໝາຍທາງດ້ານກົດໝາຍ, ການສົ່ງເສີມການລົງທຶນແມ່ນໜຶ່ງໃນບັນດາມາດຕະການດຶງດູດການລົງທຶນທີ່ມີປະສິດທິພາບ. ໂດຍສະເພາະໃນສະພາບການທີ່ບັນດາປະເທດໃນໂລກລ້ວນແຕ່ມີຈຸດພິເສດລວມແມ່ນຕ້ອງການທຶນຮອນຄືຕ້ອງການໃຫ້ມີສິ່ງທີ່ຈຳເປັນເພື່ອຊ່ວຍໃຫ້ພື້ນຖານເສດຖະກິດສາມາດຄົງຕົວ ແລະ ພັນທະນາ. ສະນັ້ນ, ການສົ່ງເສີມການລົງທຶນຍິ່ງກາຍເປັນສິ່ງທີ່ຂາດບໍ່ໄດ້. ເຫັນໄດ້ຄວາມສຳຄັນຄືແນວນັ້ນ, ເກືອບວ່າທຸກປະເທດ ໃນໂລກໄດ້ມີການປະກາດໃຊ້ບັນດານິຕິກຳທາງດ້ານກົດໝາຍທີ່ມີການປັບປຸງບັນຫາການສົ່ງເສີມການລົງທຶນຄືເຄື່ອງມືທີ່ມີຄຸນຄ່າ ແລະ ສອດຄ່ອງກັບລະບຽບການຂອງສາກົນໃນການສ້າງສະພາບແວດລ້ອມການລົງທຶນທີ່ມີການແຂ່ງຂັນ ສູງໃນຂົງເຂດການດຶງດູດການລົງທຶນ.

ການສົ່ງເສີມການລົງທຶນແມ່ນທັງໝົດບັນດາຂໍ້ກຳນົດທີ່ລັດຖະບານປະກາດໃຊ້ເພື່ອສ້າງເງື່ອນໄຂສະດວກ ຫຼື ສ້າງຜົນປະໂຫຍດໃຫ້ບັນດາຜູ້ລົງທຶນພາຍໃນປະເທດກໍຄືຕ່າງປະເທດໃນເວລາດຳເນີນການລົງທຶນ, ບົນພື້ນຖານການປະສານທີ່ໜ້າເພິ່ງພໍໃຈລະຫວ່າງຜົນປະໂຫຍດຂອງລັດ,ຂອງພື້ນຖານເສດຖະກິດ-ສັງຄົມ ແລະ ຂອງບັນດາຜູ້ລົງທຶນ.

**+ ຄວາມສຳຄັນ:**

ຄວາມໝາຍຄວາມສຳຄັນຂອງການສົ່ງເສີມການລົງທຶນ ແມ່ນແນ່ໃສ່ປຸກລະດົມທຸກພາກສ່ວນເສດຖະກິດໄດ້ນຳໃຊ້ແຫຼ່ງທຶນ, ຊັບພະຍາກອນ, ແຮງງານ, ສະຕິປັນຍາທີ່ມີ ແລະ ບົ່ມຊ້ອນຢູ່ໃນປະເທດເພື່ອມາປະກອບເຂົ້າໃນຫົວໜ່ວຍທຸລະກິດເພື່ອສົ່ງເສີມລາຍໄດ້ໃຫ້ກັບບຸຄົນ ຫຼື ນິຕິບຸກຄົນເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນໃຫ້ນັບມື້ນັບດີຂຶ້ນເລື່ອຍໆ. ພ້ອມດຽວກັບການສົ່ງເສີມການລົງທຶນກໍ່ເປັນການພັດທະນາສ້າງສາປະເທດຊາດ ຫຼື ສ້າງລະບົບເສດຖະກິດຂອງປະເທດໃຫ້ມີຄວາມເຂັ້ມແຂງເຮັດໃຫ້ລັດສາມາດເກັບລາຍຮັບໄດ້ຫຼາຍຂຶ້ນ, ນອກຈາກນັ້ນການສົ່ງເສີມການລົງທຶນຍັງເປັນການສ້າງສີສັນໃຫ້ກັບຫົວໜ່ວຍທຸລະກິດໃຫ້ມີຫຼາກຫຼາຍ ແລະ ເປັນການຮັບປະກັນໃນການຜະລິດສິນຄ້າ , ການບໍລິການມີປະສິດທິພາບເພື່ອເຮັດໃຫ້ຜູ້ບໍລິໂພກ, ອຸປະໂພກໄດ້ມີໂອກາດນຳໃຊ້ ຫຼື ເລືອກໃຊ້ບໍລິການທີ່ມີປະສິດທິຜົນສູງສຸດ.

ການສົ່ງເສີມການລົງທຶນ ນັບວ່າມີຄວາມສຳຄັນຢ່າງຍິ່ງໃນລະບົບເສດຖະກິດ-ສັງຄົມ, ເພາະການສົ່ງເສີມການລົງທຶນກໍໃຫ້ເກີດສິນຄ້າອຸປະໂພກ (ມີການຜະລິດ), ການບໍລິໂພກ (ຈັບຈ່າຍໃຊ້ສອຍ) ແລະ ການບໍລິການ ຕ່າງໆ (ມີການຈ້າງງານ,ມີລາຍໄດ້) ຢ່າງເປັນຂະບວນ ເພື່ອຕອບສະໜອງຄວາມຕ້ອງການຂອງສັງຄົມ ຍ້ອນວ່າ:

- ການລົງທຶນມີຄວາມສຳຄັນຕໍ່ລະບົບເສດຖະກິດ: ການລົງທຶນກໍ່ໃຫ້ເກີດມີລາຍໄດ້ຕໍ່ຫົວຄົນ, ເມື່ອມີການລົງທຶນທາງທຸລະກິດ ຫຼື ທາງເສດຖະກິດ ເຮັດໃຫ້ເກີດມີການຈ້າງງານ,ບຸກຄົນທີ່ຮັບຈ້າງກໍຈະໄດ້ຄ່າຈ້າງ ຫຼື ເປັນເງິນເດືອນເປັນ

ຄ່າຕອບແທນ, ຕໍ່ຄອບຄົວພໍ່ແມ່ສົ່ງລູກເຂົ້າຮຽນຈົນສຳເລັດການສຶກສາ, ເມື່ອລູກມີວຽກເຮັດງານທຳ ກໍຈະຊ່ວຍໃຫ້ຄອບຄົວມີລາຍໄດ້ເພີ່ມຂຶ້ນ, ໂດຍສະເພາະ ຫາກມີການວາງແຜນການດຳລົງຊີ ວິດຢ່າງປະຢັດ, ອົດທົນ ແລະ ຄວບຄຸມການໃຊ້ຈ່າຍໃຫ້ຢູ່ໃນງົບປະມານທີ່ຈັດໄວ້ແລ້ວຖານະຄອບຄົວກໍຈະດີຂຶ້ນເທື່ອລະກ້າວ.

- ການລົງທຶນກໍ່ໃຫ້ເກີດການຂະຫຍາຍຕົວທາງເສດຖະກິດ: ເມື່ອມີການລົງທຶນກໍ່ຈະມີການຈ້າງງານ, ຄົນມີລາຍໄດ້ເມື່ອມີອຳນາດຊື້ເພີ່ມຂຶ້ນ ກໍຈະຈັບຈ່າຍໃຊ້ສອຍໄດ້, ສ່ວນໜຶ່ງໄປຊື້ສິນຄ້າ ເຮັດໃຫ້ມີຜູ້ລົງທຶນຜະລິດສິນຄ້າອອກມາສະໜອງຄວາມຕ້ອງການເພີ່ມຂຶ້ນເລື້ອຍໆ. ລາຍໄດ້ບາງສ່ວນກໍ່ຈະຖືກສະສົມໄປຝາກໄວ້ສະຖາບັນການເງິນ ຫຼື ລົງທຶນຊື້ຫຼັກຊັບທີ່ມີຜູ້ນຳອອກມາຈຳໜ່າຍ ເພື່ອຫາເງິນທຶນໄປຂະຫຍາຍກິດຈະການຕໍ່ໄປ, ສະຖາບັນການເງິນເອງທີ່ຮັບຝາກເງິນນຳປະຊາຊົນກໍຈະຕ້ອງນຳເງິນນັ້ນໄປລົງທຶນຕໍ່ໄປອີກ ບໍ່ແມ່ນວ່າໃນຫຼັກຊັບໂດຍກົງເຊັ່ນ: ຊື້ພັນທະບັດລັດຖະການ, ໃຫ້ສິນເຊື່ອແກ່ຜູ້ລົງທຶນ ທີ່ຈະນຳສິນເຊື່ອນັ້ນ ໄປຊື້ອຸປະກອນການຜະລິດເຊັ່ນ: ຂາຍໂຮງງານ, ປັບປຸງປະສິດທິພາບການຜະລິດເຮັດໃຫ້ມີຜົນຜະລິດສູງຂຶ້ນເປັນຕົ້ນ.

**3. ຄວາມເປັນມາຂອງການລົງທຶນໃນ ສປປ ລາວ**

ໃນໄລຍະຜ່ານມາ ສປປ ລາວ ໄດ້ຮັບຜົນກະທົບມາຈາກໄພສົງຄາມກໍຄືການເປັນຫົວເມືອງຂຶ້ນຂອງບັນດາປະເທດລ່າຫົວເມືອງຂຶ້ນມາຫຼາຍທົດສະວັດ, ພາຍຫຼັງປະເທດໄດ້ຮັບການປົດປ່ອຍໃນວັນທີ 2 ທັນວາ 1975 ລັດຖະບານແມ່ນໄດ້ສຸມໃສ່ປັບປຸງພັດທະນາພື້ນຖານໂຄງລ່າງເສດຖະກິດ ແລະ ປົກປັກຮັກສາຄວາມໝັ້ນຄົງຂອງລະບອບໃໝ່ໂດຍການນຳໃຊ້ນະໂຍບາຍເສດຖະກິດແບບລວມສູນຄືການວາງແຜນຈາກສູນກາງປະກອບການປິດລ້ອມເສດຖະກິດຈາກໂລກພາຍນອກ, ມາຮອດປີ 1986 ພັກ ແລະ ລັດຖະບານໄດ້ມີການຫັນປ່ຽນເສດຖະກິດແບບໃໝ່ໂດຍການນຳໃຊ້ເສດຖະກິດແບບຕະຫຼາດເອີ້ນວ່າ "ຈິນຕະນາການໃໝ່" ທີ່ມີການເຊື່ອມໂຍງກັບບັນດາປະເທດຕ່າງໆຫຼາຍຂຶ້ນ ນັບຕັ້ງແຕ່ນັ້ນມາປະເທດເຮົາກໍໄດ້ມີການເປີດກວ້າງການພົວພັນກັບຫຼາຍປະເທດ ແລະ ເຫັນວ່າ: ເສດຖະ ກິດກໍຄືການເຄື່ອນໄຫວການລົງທຶນໂດຍພື້ນຖານມີການຂະຫຍາຍຕົວດີຂຶ້ນເລື້ອຍໆ.

ມາຮອດເດືອນກໍລະກົດ 1988 ພັກ ແລະ ລັດຖະບານກໍໄດ້ອອກກົດໝາຍວ່າດ້ວຍການລົງທຶນຕ່າງປະເທດ, ໂດຍມີການສ້າງຕັ້ງຫ້ອງການຄະນະກຳມະການຄຸ້ມຄອງການລົງທຶນຂຶ້ນ (ຄລທ) ແລະ ໃນປີ 1994 ໄດ້ມີການປັບປຸງກົດໝາຍວ່າດ້ວຍການສົ່ງເສີມ ແລະ ການຄຸ້ມຄອງການລົງທຶນຕ່າງປະເທດຢູ່ ສປປ ລາວ ຄືນໃໝ່ໂດຍມີຈຸດປະສົງເພື່ອດຶງດູດເອົາການລົງທຶນຈາກຕ່າງປະເທດເຂົ້າມາໃຫ້ຫຼາຍຂຶ້ນ. ຫຼັງຈາກນັ້ນ, ໃນທ້າຍປີ 1997ໄດ້ເກີດວິກິດການການເງິນໃນອາຊີເຮັດໃຫ້ບັນດາປະເທດໃນຂົງເຂດອາຊີຕາເວັນອອກສຽງໃຕ້ພົບກັບບັນຫາດ້ານການເງິນເວົ້າລວມ, ເວົ້າສະເພາະລາວ ແມ່ນປະເທດໜຶ່ງທີ່ຖືກຜົນກະທົບດັ່ງກ່າວ ຊຶ່ງເຮັດໃຫ້ການຈະເລີນເຕີບໂຕຂອງເສດຖະກິດຂະຫຍາຍຕົວຊ້າ.

ເພື່ອເຮັດໃຫ້ການບໍລິການລົງທຶນມີຄວາມສະດວກ, ວ່ອງໄວ ແລະ ງ່າຍດາຍຍິ່ງຂຶ້ນລັດຖະບານຈຶ່ງໄດ້ປັບປຸງລະບຽບການໃນການສົ່ງເສີມການລົງທຶນ ເພື່ອຍາດແຍ່ງເອົາການລົງທຶນ ທັງພາຍໃນ ແລະ ຕ່າງປະເທດໃຫ້ຫຼາຍຂຶ້ນໂດຍສະເພາະໄດ້ປັບປຸງບັນດາກົດໝາຍ, ລະບຽບການ ເພື່ອໃຫ້ສອດຄ່ອງກັບສະພາບໃນປັດຈຸບັນ ເປັນຕົ້ນແມ່ນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນທົ່ວໄປ ສະບັບເລກທີ 02/ສພຊ, ລົງວັນທີ 08 ກໍລກົດ 2009 ແລະ ດຳລັດເລກທີ 119/ນຍ, ລົງວັນທີ 20 ເມສາ 2011 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ແນໃສ່ເພື່ອຍົກລະດັບ ແລະ ຂອບເຂດການໃຫ້ບໍລິການຮອບດ້ານກວ່າເກົ່າ ເປັນຕົ້ນແມ່ນລະບົບຕອບສະ ໜອງຂໍ້ມູນທີ່ມີຄຸນນະພາບ ແລະ ທັນສະໄໝແກ່ຜູ້ລົງທຶນ, ການອອກໃບອະນຸຍາດຕ່າງໆ, ການປະສານງານລະ ຫວ່າງຂະແໜງການທີ່

ກ່ຽວຂ້ອງ, ໂດຍອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ,ລົງວັນທີ 08 ກໍລະກົດ 2009 ໃນໝວດ 6;ມາດຕາ 44: ການບໍລິການລົງທຶນປະຕູດຽວ One Stop Service ແລະ ດຳລັດເລກທີ 119/ນຍ, ລົງວັນທີ 20 ເມສາ 2011 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນໃນໝວດທີ 6; ມາດຕາ 22: ການບໍລິການ ການລົງທຶນປະຕູດຽວ One Stop Service, ຂໍ້ຕົກລົງທ່ານນາຍົກລັດ ຖະມົນຕີວ່າດ້ວຍການຈັດຕັ້ງປະຕິບັດກົນໄກການບໍລິການຜ່ານປະຕູດຽວ One Stop Service ຢູ່ອົງການບໍລິ ຫານຂອງລັດ ສະບັບເລກທີ 86/ນຍ, ລົງວັນທີ 03 ສິງຫາ 2007 ແລະ ຄຳສັ່ງຂອງນາຍົກລັດຖະມົນຕີສະບັບເລກທີ 09/ນຍລົງວັນທີ 28 ມັງກອນ 2013 ວ່າດ້ວຍການເພີ່ມທະວີການຈັດຕັ້ງປະຕິບັດກົນໄກການບໍລິການຜ່ານປະຕູດຽວ One Stop Service ໃນຂອບເຂດທົ່ວປະເທດ.

ອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແມ່ນໄດ້ກຳນົດການບໍລິການການລົງທຶນປະຕູດຽວ One Stop Service ຢູ່ 3 ຂະແໜງຄື: (1). ຂະແໜງແຜນການ ແລະ ການລົງທຶນ (ຜທ), (2). ຂະແໜງອຸດສາຫະກຳ ແລະ ການຄ້າ (ອຄ), (3). ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ(ຂພສ) ກຳນົດໃຫ້ພະນັກງານມາປະຈຳລວມສູນຢູ່ບ່ອນດຽວເພື່ອໃຫ້ບໍລິການແກ່ຜູ້ລົງທຶນ.

ໃນໄລຍະຜ່ານມາ, ການຈັດຕັ້ງປະຕິບັດການບໍລິການປະຕູດຽວ One Stop Service ຢູ່ຂະແໜງອຸດສາຫະກຳ ແລະ ການຄ້າຖືວ່າມີດ້ານດີ ແລະ ຂໍ້ຄົງຄ້າງບາງຢ່າງ ເຊັ່ນ: ດ້ານດີ ການບໍລິການກາແຈ້ງຂຶ້ນຂຶ້ນ ແລະ ປັບປຸງ ແປງເນື້ອໃນທະບຽນວິສາຫະກິດມີຂັ້ນຕອນທີ່ສະດວກ, ວ່ອງໄວ, ໂປ່ງໃສ ແລະ ງ່າຍດາຍ, ເຮັດໃຫ້ປະຊາກອນທຸລະກິດເພີ່ມຂຶ້ນຢ່າງຕໍ່ເນື່ອງ.

ສປປ ລາວ ເປັນປະເທດໜຶ່ງທີ່ມີພົນລະເມືອງສ່ວນໃຫຍ່ແມ່ນດຳລົງຊີວິດດ້ວຍການກະສິກຳທີ່ຕິດພັນກັບທຳມະຊາດ, ລະດັບການຂະຫຍາຍຕົວການຜະລິດຍັງຕໍ່າ, ການແບ່ງງານໃນສັງຄົມຍັງບໍ່ທັນມີການຂະຫຍາຍຕົວ,ເຄື່ອງມືໃນການອອກແຮງງານແມ່ນຍັງແບບປະຖົມປະຖານ, ລະດັບວິທະຍາສາດ-ເຕັກນິກຂອງຜູ້ອອກແຮງງານແມ່ນຍັງຕໍ່າ, ຍັງຂາດພະນັກງານດ້ານເຕັກ ນິກວິທະຍາສາດ. ດັ່ງນັ້ນການປະຕິບັດວຽກງານຈິ່ງເປັນສາເຫດໃຫ້ມີການຊັກຊ້າ, ຄຸນນະພາບຂອງສິນຄ້າ ແລະ ຜະ ລິດຕະພັນຍັງບໍ່ສູງ.

ໂຮງງານອຸດສາຫະກຳຍັງມີໜ້ອຍ, ເກົ່າແກ່, ເຕັກນິກຍັງຫຼ້າຫຼັງ, ວັດຖຸດິບສຳລັບປ້ອນໂຮງງານລວມທັງນ້ຳມັນເຊື້ອໄຟສ່ວນໃຫຍ່ແມ່ນຂຶ້ນກັບຕ່າງປະເທດເກືອບໝົດ.

ໃນການຮ່ວມມືກັບຕ່າງປະເທດລັດຖະບານມີນະໂຍບາຍພົວພັນເສດຖະກິດກັບຕ່າງປະເທດໂດຍສະເພາະແມ່ນບັນດາປະເທດສັງຄົມນິຍົມອ້າຍນ້ອງອື່ນໆ ແລະ ບັນດາປະເທດເພື່ອນບ້ານເຊັ່ນ: ຫວຽດນາມ, ໄທ, ມຽນມາ, ຈີນ ແລະ ອື່ນໆ...

ການພົວພັນແມ່ນການແລກປ່ຽນຊື້-ຂາຍຮ່ວມກັນໂດຍຕ່າງຝ່າຍຕ່າງມີຜົນປະໂຫຍດເນື່ອງຈາກສະພາບການຂອງໂລກໄດ້ມີການປ່ຽນແປງບັນດາປະເທດສັງຄົມນິຍົມຕ່າງໆໄດ້ມີການປ່ຽນແປງຢ່າງຮອບດ້ານເພື່ອປັບຕົວໃຫ້ແທດເໝາະກັບສະພາບການໃນຍຸກສະໄໝປັດຈຸບັນ ແລະ ໃຫ້ແທດເໝາະກັບເສດຖະກິດຂອງແຕ່ລະປະເທດ.

ລັດເຮົາຈຶ່ງມີນະໂຍບາຍຮ່ວມມືກັບຕ່າງປະເທດທາງດ້ານເສດຖະກິດເຊິ່ງເລີ່ມປະຕິບັດຕົວຈິງນັບແຕ່ປີ 1989 ເປັນຕົ້ນມາ ລັດເຮົາໄດ້ເປີດປະຕູຕ້ອນຮັບການລົງທຶນຂອງຕ່າງປະເທດເພື່ອໃຫ້ບັນດານັກທຸລະກິດຕ່າງປະເທດທັງໃຫຍ່ເຂົ້າມາລົງທຶນຕາມຂະແໜງການທຸລະກິດທີ່ລັດເຮົາໄດ້ກຳນົດໃຫ້ບົນພື້ນຖານຂອງລະບຽບກົດໝາຍຂອງ ສປປ ລາວ

ນະໂຍບາຍດັ່ງກ່າວແມ່ນຖືກຮັບຮອງເອົາໂດຍສະພາແຫ່ງຊາດຊຶ່ງເປັນການສ້າງເງື່ອນໄຂເອື້ອອຳນວຍຄວາມສະດວກໃຫ້ແກ່ຜູ້ລົງທຶນ.

ນອກຈາກນັ້ນລັດເຮົາກໍ່ໄດ້ມີລະບຽບການຕ່າງໆ ທີ່ລັດເຮົາປະກາດໃຊ້ເພື່ອຮັບຮອງເອົາການລົງທຶນໃນນັ້ນລັດເຮົາຍັງມີລັດຖະທຳມະນູນເຊິ່ງເປັນຈຸດຢືນອັນສຳຄັນ, ພ້ອມນັ້ນຍັງມີກົດໝາຍວ່າດ້ວຍການລົງທຶນຂອງຕ່າງປະເທດ ສະບັບເລກທີ 07/ປສລ ລົງວັນທີ 9 ເມສາ 1988 ເຊິ່ງຖືກແກ້ດ້ວຍກົດໝາຍວ່າດ້ວຍການສົ່ງເສີມ ແລະ ການຄຸ້ມຄອງການລົງທຶນຂອງຕ່າງປະເທດ ເລກທີ 01/94 ສພຊ ລົງວັນທີ 14 ມີນາ 1994 ຖືກປະກາດໃຊ້ຕາມລັດຖະດຳລັດຂອງປະທານປະເທດແຫ່ງ ສປປ ລາວ ເລກທີ 23/ສປປ ລົງວັນທີ 21 ເມສາ 1994 ແລະ ກົດໝາຍວ່າດ້ວຍການສົ່ງເສີມ ແລະ ການຄຸ້ມຄອງການລົງທຶນພາຍໃນປະເທດ ເລກທີ 03-95/ສພຊ ລົງວັນທີ 14 ຕຸລາ ປີ 1995 ຖືກປະກາດໃຊ້ຕາມລັດຖະດຳລັດຂອງປະທານປະເທດແຫ່ງ ສປປ ລາວ ເລກທີ 27/ສປປ ລົງວັນທີ 26 ຕຸລາ ປີ 1995, ດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດຢູ່ໃນ ສປປ ລາວ ສະບັບເລກທີ 046/ນຍ ລົງວັນທີ 23 ມີນາ 2001, ນອກນັ້ນຍັງມີກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ ສະບັບເລກທີ 10/ສພຊ ລົງວັນທີ 22 ຕຸລາ ປີ 2004, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດ ສະບັບເລກທີ 11/ສພຊ ລົງວັນທີ 22 ຕຸລາ ປີ 1994, ດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດ ສະບັບເລກທີ 301/ນຍ ລົງວັນທີ 12 ຕຸລາ 2005, ດຳລັດວ່າດ້ວຍເຂດເສດຖະ ກິດພິເສດສະຫວັນ-ເຊໂນ ສະບັບເລກທີ 177/ນຍ ລົງວັນທີ 13 ພະຈິກ 2003 ແລະ ຂໍ້ຕົກລົງຂອງປະທານຄຸ້ມຄອງການລົງທຶນຮ່ວມມືກັບຕ່າງປະເທດວ່າດ້ວຍການພິຈາລະນາອະນຸມັດໂຄງການລົງທຶນຕ່າງປະເທດຢູ່ ສປປ ລາວ ສະບັບເລກທີ 013/ຄລນ ລົງວັນທີ 27 ກຸມພາ 2002.

ມາຮອດປີ 2011, ລັດຖະບານແຫ່ງ ສປປ ລາວ ໄດ້ປະກາດໃຊ້ດຳລັດວ່າດ້ວຍຈັດຕັ້ງປະຕິບັດກົດໝາຍວ່າ ດ້ວຍການສົ່ງເສີມການລົງທຶນ[2] ດຳລັດດັ່ງກ່າວນີ້ເປັນດຳລັດທີ່ຈັດຕັ້ງປະຕິບັດກົດໝາຍສົ່ງເສີມການລົງທຶນສະບັບເລກ ທີ 02/ສພຊ, ລົງວັນທີ 8 ກໍລະກົດ 2009.

ອີງຕາມມາດຕາ 53 ຂໍ້ 1 ຂອງລັດຖະທຳມະນູນ (ສະບັບປັບປຸງປີ 2015) ແລະ ມາດຕາ 11 ຂໍ້ 1 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ 2015), ເຊົ້າວັນທີ 17 ພະຈິກ 2016, ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດຊຸດທີ 8, ພາຍໃຕ້ການເປັນປະທານຂອງ ທ່ານປະທານສະພາແຫ່ງຊາດໄດ້ຕົກລົງເຫັນດີຮັບຮອງເອົາກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງ, ຊຶ່ງກົດໝາຍສະບັບນີ້ ໄດ້ມີການປັບປຸງ 64 ມາດຕາ, ສ້າງໃໝ່ 28 ແລະ ຮັກສາໄວ້ 14 ມາດຕາ ປະກອບມີ: 13 ພາກ, 17 ໝວດ ແລະ 109 ມາດຕາ.

ທ່ານຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ໄດ້ສະເໜີຕໍ່ກອງປະຊຸມວ່າ: ຜ່ານການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເຮັດໃຫ້ການລົງທຶນຂອງພາກເອກະຊົນພາຍໃນ ແລະ ຕ່າງປະເທດມີການຂະຫຍາຍຕົວຫຼາຍພໍສົມຄວນ, ການລົງທຶນຂອງພາກເອກະຊົນ ກວມເອົາຫຼາຍກວ່າ 50% ຂອງການລົງທຶນທົ່ວສັງຄົມສົ່ງຜົນໃຫ້ເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ໂຄງປະກອບເສດຖະກິດໄດ້ມີການຫັນປ່ຽນຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝເປັນກ້າວໆມາ, ພ້ອມນີ້ ຍັງເຮັດໃຫ້ເສດຖະກິດຂອງປະເທດດີຂຶ້ນກວ່າປີຜ່ານມາ 5 ອັນດັບໃນທົ່ວໂລກ , ດັ່ງນັ້ນ ຈຶ່ງເຮັດໃຫ້ມີຄວາມຈຳເປັນທີ່ສຸດໃນການປັບປຸງກົດໝາຍວ່າ ດ້ວຍການສົ່ງເສີມການລົງທຶນ ສະບັບປີ 2009, ເພື່ອກຳນົດຫລັກການ, ລະບຽບການ ແລະ ມາດຕະການກ່ຽວກັບການສົ່ງເສີມ, ຄຸ້ມຄອງການລົງທຶນພາຍໃນ ແລະ

[2] ດຳລັດເລກທີ 199/ນຍ, ລົງວັນທີ 20 ເມສາ 2011ວ່າດ້ວຍຈັດຕັ້ງປະຕິບັດກົດໝາຍວ່າ ດ້ວຍການສົ່ງເສີມການລົງທຶນປີ 2009.

ຕ່າງປະເທດເພື່ອເຮັດໃຫ້ການລົງທຶນມີຄວາມສະດວກ, ວ່ອງໄວ, ໂປ່ງໃສ ແລະ ຖືກຕ້ອງ, ພ້ອມທັງໄດ້ຮັບການປົກປ້ອງດ້ານຕ່າງໆຈາກພາກລັດ ແນໃສ່ຮັບປະກັນສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ, ຂອງລັດ, ຂອງລວມໝູ່, ຂອງປະຊາຊົນສາມາດເຊື່ອມໂຍງກັບເສດຖະກິດພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງຕາມທິດ ສີຂຽວ ແລະ ຍືນຍົງ.

ພາຍຫລັງການປະກອບຄຳເຫັນຂອງສະມາຊິກສະພາແຫ່ງຊາດແຕ່ລະເຂດເລືອກຕັ້ງ, ຕາງໜ້າອະນຸກຳມະ ການກົດໝາຍດັ່ງກ່າວ ໄດ້ຂຶ້ນຊີ້ແຈງແຕ່ລະບັນຫາ ທີ່ຜູ້ແທນມີຄວາມສົນໃຈແລ້ວ, ປະທານກອງປະຊຸມໄດ້ສະຫລຸບ ສັງລວມການປະກອບຄຳເຫັນຂອງສະມາຊິກ, ພ້ອມທັງລົງຄະແນນສຽງຮັບຮອງເອົາຮ່າງກົດໝາຍວ່າດ້ວຍການ ສົ່ງເສີມການລົງທຶນ ສະບັບປັບປຸງ ດ້ວຍຄະແນນສຽງເປັນເອກກະພາບ. ໝາຍຄວາມວ່າປັດຈຸບັນພວກເຮົາໄດ້ມີກົດໝາຍວ່າ ດ້ວຍການສົ່ງເສີມ ການລົງທຶນສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016 ເພື່ອເປັນບ່ອນອີງໃນຄຸ້ມຄອງການລົງທຶນໃນ ສປປ ລາວ, ພິເສດກົດໝາຍສະບັບນີ້ຍັງໄດ້ກຳນົດກ່ຽວກັບການອອກໄປລົງທຶນຢູ່ຕ່າງປະເທດ[3], ຖືໄດ້ວ່າກົດໝາຍການສົ່ງເສີມການລົງທຶນນັບມື້ໄດ້ຮັບການປັບປຸງດີຂຶ້ນ ແລະ ສົມບູນຂຶ້ນເປັນກ້າວໆ ຕາມຍຸກຕາມສະໄໝ, ຈຸດປະສົງຂອງການປັບປຸງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນແມ່ນເພື່ອໃຫ້ສອດຄ່ອງກັບນະໂຍບາຍເຕີບໂຕແບບສີຂຽວ ຫຼື ການພັດທະນາແບບຍືນຍົງ ແລະ ວິໄສທັດແຕ່ນີ້ຮອດປີ 2030 ຂອງລັດຖະບານ, ຊຶ່ງຮຽກຮ້ອງໃຫ້ມີການທົບທວນຄືນນະໂຍບາຍ ແລະ ນິຕິກຳໃນຂົງເຂດການລົງທຶນ; ເພີ່ມທະວີການສ້າງຄວາມເຂັ້ມແຂງແກ່ອົງການຈັດຕັ້ງລັດແຕ່ຂັ້ນສູນກາງຮອດທ້ອງຖິ່ນຕາມທິດ 3 ສ້າງຂອງພັກ ແລະ ລັດຖະບານ, ຊຶ່ງເຫັນວ່າຈຳເປັນຕ້ອງມີການປັບປຸງວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນໃຫ້ມີປະສິດທິພາບກວ່າເກົ່າ ແລະ ຢ່າງມີຈຸດສຸມແບບຍຸດທະສາດ; ເພື່ອປະຕິບັດນະໂຍບາຍເຊື່ອມໂຍງກັບພາກພື້ນ ແລະ ສາກົນຮຽກຮ້ອງໃຫ້ຕ້ອງມີການປັບປຸງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ນິຕິກຳທີ່ຕິດພັນໃຫ້ສອດຄ່ອງກັບສົນທິສັນຍາຕ່າງໆ ທີ່ ສປປ ລາວເປັນພາຄີເພື່ອຍາດແຍ່ງ ແລະ ຮັບປະກັນຜົນປະໂຫຍດຈາກການຮ່ວມມືດັ່ງກ່າວໂດຍສະເພາະຈາກການເຂົ້າເປັນສະມາຊິກຂອງປະຊາຄົມເສດຖະກິດອາຊຽນ; ເພື່ອບັນລຸກົນໄກ, ຂອດຂັ້ນທີ່ເຮັດໃຫ້ວຽກງານສົ່ງເສີມການລົງທຶນໂດຍສະເພາະການອະນຸມັດລົງທຶນຊັກຊ້າແກ່ຍາວເວລາ ຫຼື ໄວແຕ່ບໍ່ຮັບປະກັນດ້ານຄຸນນະພາບ.

ພາຍຫຼັງທີ່ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນສະບັບປີ 2016 ໄດ້ນຳໃຊ້ແລ້ວ, ໂດຍອີງຕາມກົດໝາຍ ວ່າດ້ວຍລັດຖະບານສະບັບເລກທີ 04/ສພຊ,ລົງວັນທີ 08ພະຈິກ 2016, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນສະບັບເລກທີ 14/ສພຊ,ລົງວັນທີ 17ພະຈິກ 2016 ແລະ ອີງຕາມໜັງສືສະເໜີຂອງກະຊວງແຜນການ ແລະ ການລົງທຶນ, ສະບັບເລກທີ 3145/ກຜທ.ລທ4,ລົງວັນທີ 21 ທັນວາ 2017 ເພື່ອເປັນການສ້າງຄວາມຄົບຖ້ວນ ແລະ ທັງເປັນການກະຕຸກຊຸກຍູ້ທາງດ້ານນິຕິກຳຮັບໃຊ້ໃຫ້ແກ່ການເຄື່ອນໄຫວການລົງທຶນ ຢູ່ ສປປ ລາວ,ໃນນາມລັດຖະບານ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວໄດ້ອອກດຳລັດສະບັບເລກທີ 05/ນຍ, ລົງວັນທີ 05ມັງກອນ 2018 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ, ດຳລັດ ດັ່ງກ່າວໄດ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກ

[3] ພາກທີ V ກົດໝາຍສົ່ງເສີມການລົງທຶນປີ 2016

ງານແນໃສ່ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17ພະຈິກ 2016ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງປີ 2016) ໄດ້ຖືກຮັບຮອງ ແລະ ປະກາດໃຊ້ເປັນທາງການ, ມາຮອດປີ 2017 ກະຊວງແຜນການ ແລະ ການລົງທຶນໄດ້ຈັດຕັ້ງ ແລະ ຜັນຂະຫຍາຍຈາກ 21 ມາດຕາ ທີ່ເຫັນວ່າມີຄວາມຈຳເປັນຮີບດ່ວນມາເປັນນິຕິກຳລຸ່ມກົດໝາຍ ຈຳນວນ 6ສະບັບ (ກວມເອົາ 87,5%) ຂອງມາດຕາທີ່ຕ້ອງຂະຫຍາຍຄື:

- ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ;
- ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການບໍລິການ ການລົງທຶນປະຕູດຽວ One Stop Service ຂັ້ນສູນກາງ;
- ບັນຊີການລົງທຶນທີ່ມີເງື່ອນໄຂຂອງ ສປປ ລາວ;
- ດຳລັດວ່າດ້ວຍການລົງທຶນຮ່ວມລະຫວ່າງພາກລັດ ແລະ ເອກະຊົນ (PPP);
- ບົດແນະນຳວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການຜູ້ຕາງໜ້າຂອງນິຕິບຸກຄົນຕ່າງປະເທດຢູ່ ສປປ ລາວ;
- ບົດແນະນຳກ່ຽວກັບ ການໃຫ້ນະໂຍບາຍສົ່ງເສີມການລົງທຶນດ້ານພາສີ-ອາກອນ”[4].

ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 201/ນຍ, ລົງວັນທີ 30 ມິຖຸນາ 2017, ກະຊວງແຜນການ ແລະ ການລົງທຶນ (Ministry of Planning and Investment (MPI)) - ແມ່ນກົງຈັກໜຶ່ງຂອງ ລັດຖະບານມີພາລະບົດບາດ ເປັນເສນາທິການໃຫ້ແກ່ລັດຖະບານ ແລະ ຄຸ້ມຄອງມະຫາພາກດ້ານວຽກງານແຜນການ ແລະ ການລົງທຶນ, ຄົ້ນຄ້ວາກ່ຽວກັບຍຸດທະສາດ, ແຜນແມ່ບົດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ກົນໄກ ແລະ ນະໂຍບາຍລວມກ່ຽວກັບການຄຸ້ມຄອງເສດຖະກິດ, ວຽກງານສະຖິຕິ, ການສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ, ການດຶງດູດ ແລະ ຍາດແຍ່ງການຊ່ວຍເ ຫຼື ອ ແລະ ການຮ່ວມມືເສດຖະກິດກັບຕ່າງປະເທດ.

ພິເສດໃນປີ 2019 ອີງຕາມລັດຖະດຳລັດຂອງປະທານປະເທດ ແຫ່ງ ສປປ ລາວ, ສະບັບເລກທີ 033/ປປທ, ລົງວັນທີ 15 ມັງກອນ 2020 ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການປັບປຸງມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນສະບັບປັບປຸງປີ 2016 ແລະ ອີງຕາມມະຕິຂອງສະພາແຫ່ງຊາດ ສະບັບເລກທີ 35/ສພຊ, ລົງວັນທີ 04 ທັນວາ 2019 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງປີ 2016. ໃນນັ້ນ, ໄດ້ມີການປັບປຸງ ດ້ານນະໂຍບາຍສົ່ງເສີມດ້ານພາສີອາກອນ. (ລາຍລະອຽດໄດ້ກຳນົດໃນກົດໝາຍ)[5].

**4. ການສົ່ງເສີມການລົງທຶນຢູ່ ສປປ ລາວ**

---

[4] ບົດປະກອບຄຳເຫັນຂອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນຕໍ່ກັບຄຳຖາມເຈາະຈີ້ມຂອງສະມາຊິກສະພາແຫ່ງຊາດກ່ຽວກັບການສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ, ຄາດຄະເນໝົດປີ 2017ແລະ ແຜນປີ 2018 ໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ VIII.

[5] ກົດໝາຍວ່າດ້ວຍການປັບປຸງມາດຕາ 12 ຂອງກົດໝາຍວ່າເວຍການສົ່ງເສີມການລົງທຶນສະບັບປັບປຸງປີ 2016, ສະບັບເລກທີ 80/ສພຊ, ລົງວັນທີ 4 ທັນວາ 2019.

ໃນການສົ່ງເສີມການລົງທຶນກົດໝາຍໄດ້ກໍານົດດັ່ງນີ້:

ການສົ່ງເສີມການລົງທຶນແມ່ນການວາງແຜນ, ການສ້າງສະພາບແວດລ້ອມ ແລະ ການສ້າງເງື່ອນໄຂໃນດ້ານຕ່າງໆເພື່ອເປັນການເອື້ອອໍານວຍຄວາມສະດວກໃຫ້ກັບຜູ້ລົງທຶນສາມາດດໍາເນີນທຸລະກິດຢ່າງສະດວກສະບາຍ, ວ່ອງ ໄວ , ຖືກຕ້ອງຕາມລະບຽບກົດໝາຍ.

ການສົ່ງເສີມການລົງທຶນມີຫຼາຍຮູບແບບເຊັ່ນ: ການໃຫ້ນະໂຍບາຍໃນດ້ານຕ່າງໆເຊັ່ນ: ນະໂຍບາຍດ້ານພາສີ, ອາກອນ, ນະໂຍບາຍດ້ານການເຂົ້າ-ອອກ ແລະ ນະໂຍບາຍອື່ນໆເພື່ອໃຫ້ເກີດປະໂຫຍດແກ່ການລົງທຶນ.

ໃນປີ 2016, ກົດຫມາຍວ່າດ້ວຍການສົ່ງເສີມການລົງທຶນ ໄດ້ຖືກດັດແກ້ ໂດຍສຸມໃສ່ອໍານວຍຄວາມສະດວກໃຫ້ແກ່ນັກລົງທຶນພາຍໃນ ແລະ ຕ່າງປະເທດດໍາເນີນທຸລະກິດໃນ ສປປ ລາວ.

ລັດຖະບານ ຍາມໃດກໍ່ສົ່ງເສີມການລົງທຶນໃນທຸກຂະແໜງການ ແລະ ທຸກເຂດແຄວ້ນ ໃນທົ່ວປະເທດຍົກ ເວັ້ນການດໍາເນີນທຸລະກິດ ທີ່ແຕະຕ້ອງເຖິງຄວາມຫມັ້ນຄົງ, ແລະ ຄວາມສະຫງົບຂອງຊາດ, ມີຜົນສະທ້ອນອັນຮ້າຍແຮງຕໍ່ສະພາບແວດລ້ອມ, ຕໍ່ສຸຂະພາບຂອງປະຊາຊົນລາວ ແລະ ວັດທະນະທໍາອັນດີງາມຂອງຊາດ.

ຄວາມສະດວກຂອງການລົງທຶນໃນ ສປປ ລາວ: ມີຄວາມຫມັ້ນຄົງ ດ້ານການເມືອງ ແລະ ເສດຖະກິດມີຊັບພະຍາກອນທາງນໍ້າ ແລະ ຊັບພະຍາກອນທໍາມະຊາດ ເຊິ່ງລວມມີແຮ່ທາດ, ແຫຼ່ງພະລັງງານ, ປ່າໄມ້ທີ່ຍັງບໍ່ທັນໄດ້ ຖືກນໍາໃຊ້ ແລະ ສາມາດຖືກພັດທະນາຜ່ານເຕັກໂນໂລຊີ ແລະ ປຽູນໃຫ້ເປັນສິນຄ້າສົ່ງອອກສູ່ຕະຫຼາດສາກົນໄດ້ຄ່າ ແຮງງານຕໍ່າ, ລາວ ຕັ້ງຢູ່ຂົງເຂດເສດຖະກິດທີ່ພວມຂະຫຍາຕົວ ແລະ ມີຊາຍແດນຕິດກັບປະເທດໄທ, ຫວຽດນາມ, ກໍາປູເຈຍ, ພະມ້າ ແລະ ຈີນ, ສປປ ລາວ ເປັນປະເທດເຊື່ອມໂຍງເຂົ້າສູ່ຕະຫຼາດອາຊຽນ ແລະ ພາກໃຕ້ຂອງຈີນ, ລັດຖະບານລາວໄດ້ມີນະໂຍບາຍສ້າງເຂດເສດຖະກິດພິເສດ, ມີກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ວິສາຫະກິດ, ແຮງງານ ແລະ ອື່ນໆ, ສປປ ລາວ ແມ່ນໄດ້ຮັບລະບົບສິດທິພິເສດທາງການຄ້າ ແລະ ທົ່ວໄປ (GSP) (Good Storage Practice) ຈາກຫຼາຍກວ່າ 40 ປະເທດ ແລະ ໄດ້ຮັບສິດຈາກສາຍພົວພັນການຄ້າແບບປົກກະຕິນໍາປະເທດສະຫະລັດອາເມລິກາ. ນອກຈາກນັ້ນ, ຫຼາຍປະເທດ ຈາກເອີຣົບ ແລະ ຍີປຸ່ນ ຍັງໃຫ້ ສປປ ລາວ ສິດທິພິເສດທາງດ້ານການຄ້າເຊັ່ນ: ການຍົກເວັ້ນພາສີນໍາເຂົ້າ ເຊິ່ງມີຫຼາຍຮ້ອຍກວ່າ ລາຍການທີ່ຢູ່ພາຍໃຕ້ສິດທິພິເສດນັ້ນ. ດັ່ງນັ້ນ, ສິນຄ້າຂອງລາວສາມາດເຂົ້າສູ່ຕະຫຼາດສາກົນໄດ້ ໂດຍພາສີຕໍ່າ ຫຼື ປອດພາສີ, ສປປ ລາວ ຍັງມີນະໂຍບາຍທາງດ້ານອາກອນໃຫ້ແກ່ຜູ້ລົງທຶນ ເຊັ່ນ: ການຍົກເວັ້ນອາກອນ, ອາກອນມື້ພັກ, ຍົກເວັ້ນອາກອນນໍາເຂົ້າສໍາລັບບາງວັດຖຸດິບ ທີ່ຈະຖືກຜະລິດ ແລະ ສົ່ງອອກ ຫຼື ບໍ່ມີອາກອນສໍາລັບສົ່ງອອກ.

ອີງຕາມດໍາລັດຂອງນາຍົກລັດຖະມົນຕີ ເລກທີ 201/ນຍ, ລົງວັນທີ 30 ມິຖຸນາ 2017, ກະຊວງແຜນການ ແລະ ການລົງທຶນ ແມ່ນກົງຈັກໜຶ່ງຂອງລັດຖະບານ ມີພາລະບົດບາດ ເປັນເສນາທິການໃຫ້ແກ່ລັດຖະບານ ແລະ ຄຸ້ມຄອງມະຫາພາກດ້ານວຽກງານແຜນການ ແລະ ການລົງທຶນ, ຄົ້ນຄ້ວາກ່ຽວກັບຍຸດທະສາດ, ແຜນແມ່ບົດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ກົນໄກ ແລະ ນະໂຍບາຍລວມກ່ຽວກັບການຄຸ້ມຄອງເສດຖະກິດ, ວຽກງານສະຖິຕິ, ການສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ, ການດຶງດູດ ແລະ ຍາດແຍ່ງການຊ່ວຍເຫຼືອ ແລະ ການຮ່ວມມືເສດຖະກິດກັບຕ່າງປະເທດ.

**5. ຂໍ້ສະດວກ ແລະ ຜົນປະໂຫຍດຂອງການລົງທຶນໃນ ສປປ ລາວ**

ຜູ້ລົງທຶນ ຫຼື ນັກລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນໃນ ສປປ ລາວ ຈະມີຂໍ້ສະດວກ ແລະ ຜົນປະໂຫຍດຂອງການລົງທຶນດັ່ງນີ້:

• **ຄວາມໝັ້ນຄົງ ດ້ານການເມືອງ ແລະ ເສດຖະກິດ:** ມີຊັບພະຍາກອນທາງນໍ້າ ແລະ ຊັບພະຍາກອນທຳມະຊາດເຊິ່ງລວມມີແຮ່ທາດ, ແຫຼ່ງພະລັງງານ, ປ່າໄມ້ທີ່ຍັງບໍ່ທັນໄດ້ຖືກນຳໃຊ້ ແລະ ສາມາດຖືກພັດທະນາຜ່ານເຕັກໂນໂລຊີ ແລະ ປຸງແຕ່ງໃຫ້ເປັນສິນຄ້າສົ່ງອອກສູ່ຕະຫຼາດສາກົນໄດ້;

• **ຄ່າແຮງງານຕໍ່າ:** ລາວ ຕັ້ງຢູ່ຂົງເຂດເສດຖະກິດທີ່ພວມຂະຫຍາຍຕົວ ແລະ ມີຊາຍແດນຕິດກັບປະເທດໄທ, ຫວຽດນາມ, ກຳປູເຈຍ ແລະ ຈີນ ພ້ອມທັງເປັນປະເທດເຊື່ອມໂຍງເຂົ້າສູ່ຕະຫຼາດອາຊຽນ ແລະ ພາກໃຕ້ຂອງ ສປ ຈີນ;

• **ລັດຖະບານລາວໄດ້ມີນະໂຍບາຍສ້າງ ເຂດເສດຖະກິດພິເສດ:** ມີກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ວິສາຫະກິດ, ແຮງງານ ແລະ ອື່ນໆ ສປປ ລາວ ແມ່ນໄດ້ຮັບລະບົບສິດທິພິ ເສດທາງການຄ້າ ແລະ ທົ່ວໄປ (GSP) ຈາກຫຼາຍກວ່າ 40 ປະເທດ, ນອກຈາກນັ້ນຫຼາຍປະເທດຈາກເອີຣົບ ແລະ ຍີ່ປຸ່ນ ຍັງໃຫ້ ສປປ ລາວ ໄດ້ຮັບສິດທິພິເສດທາງດ້ານການຄ້າເຊັ່ນ: ການຍົກເວັ້ນພາສີນຳເຂົ້າ ເຊິ່ງມີຫຼາຍກວ່າ 200 ລາຍການທີ່ຢູ່ພາຍ ໃຕ້ສິດທິພິເສດນັ້ນ, ດັ່ງນັ້ນສິນຄ້າຂອງລາວສາມາດເຂົ້າສູ່ຕະຫຼາດສາກົນໄດ້ໂດຍພາສີຕໍ່າ ຫຼື ປອດພາສີ.

ສປປ ລາວ ຍັງມີນະໂຍບາຍທາງດ້ານອາກອນໃຫ້ແກ່ຜູ້ລົງທຶນ ເຊັ່ນ: ການຍົກເວັ້ນອາກອນ, ອາກອນມື້ພັກ, ຍົກເວັ້ນອາກອນນຳເຂົ້າສຳລັບບາງວັດຖຸດິບທີ່ຈະຖືກຜະລິດ ແລະ ສົ່ງອອກ ຫຼື ບໍ່ມີອາກອນສຳລັບສົ່ງອອກ.

## 6. ນະໂຍບາຍຂອງລັດ ແຫ່ງ ສປປ ລາວ ຕໍ່ກັບການສົ່ງເສີມການລົງທຶນ

ນະໂຍບາຍການລົງທຶນຂອງ ສປປ ລາວ ແມ່ນໄດ້ຖືກປັບປຸງເພື່ອດຶງດູດ ແລະ ສະໜັບສະໜູນການລົງທຶນພາຍໃນ ແລະ ຕ່າງປະເທດ ໃນ ສປປ ລາວ, ໃນປີ 2016 ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນໄດ້ຖືກດັດແກ້ ໂດຍສຸມໃສ່ອຳນວຍຄວາມສະດວກໃຫ້ແກ່ນັກລົງທຶນພາຍໃນ ແລະ ຕ່າງປະເທດທີ່ດຳເນີນທຸລະກິດໃນ ສປປ ລາວ.

ລັດຖະບານຍາມໃດກໍ່ສົ່ງເສີມການລົງທຶນໃນທຸກຂະແໜງການ ແລະ ທຸກເຂດແຄ້ວນໃນທົ່ວປະເທດ ຍົກເວັ້ນການດຳເນີນທຸລະກິດທີ່ແຕະຕ້ອງເຖິງຄວາມໝັ້ນຄົງ ແລະ ຄວາມສະຫງົບຂອງຊາດມີຜົນສະທ້ອນອັນຮ້າຍ ແຮງຕໍ່ສະພາບແວດລ້ອມ, ຕໍ່ສຸຂະພາບຂອງປະຊາຊົນລາວ ແລະ ວັດທະນະທຳອັນດີງາມຂອງຊາດ.

ນະໂຍບາຍຂອງລັດກ່ຽວກັບການສົ່ງເສີມການລົງທຶນນີ້ໄດ້ຖືກກຳນົດເອົາໄວ້ລະອຽດດັ່ງນີ້:

ລັດສົ່ງເສີມການລົງທຶນຂອງທຸກພາກສ່ວນເສດຖະກິດທັງພາຍໃນ ແລະ ຕ່າງປະເທດດ້ວຍການວາງແຜນນະໂຍບາຍເພື່ອສ້າງສະພາບແວດລ້ອມ, ເງື່ອນໄຂເອື້ອອຳນວຍຄວາມສະດວກດ້ານຕ່າງໆ ເປັນຕົ້ນ ການກຳນົດທິດທາງ, ການສະໜອງຂໍ້ມູນຂ່າວສານທີ່ຈຳເປັນ, ການໃຫ້ນະໂຍບາຍດ້ານພາສີອາກອນ, ດ້ານແຮງງານ, ການໃຫ້ສິດນຳໃຊ້ທີ່ດິນ, ການໃຫ້ບໍລິການລົງທຶນປະຕູດຽວລວມທັງການຮັບຮູ້, ການຮັບປະກັນ, ການປົກປ້ອງກຳມະສິດ, ສິດ, ຜົນປະໂຫຍດ ແລະ ດ້ານອື່ນໆທີ່ຖືກຕ້ອງຕາມກົດໝາຍຂອງຜູ້ລົງທຶນຈາກລັດ, ພ້ອມດຽວກັນລັດສົ່ງເສີມໃຫ້ລົງທຶນໃນທຸກຂະແໜງການ, ກິດຈະການ ແລະ ທຸກເຂດແຄວ້ນໃນທົ່ວປະເທດເວັ້ນເສຍແຕ່ເຂດ ແລະ ກິດຈະການທີ່ແຕະຕ້ອງເຖິງຄວາມໝັ້ນຄົງ ແລະ ຄວາມສະຫງົບຂອງຊາດທີ່ມີຜົນສະທ້ອນອັນຮ້າຍແຮງຕໍ່ສິ່ງແວດລ້ອມໃນປັດຈຸບັນ ແລະ ຍາວນານຕໍ່ສຸຂະພາບຂອງປະຊາຊົນ ແລະ ວັດທະນະທຳອັນດີງາມຂອງຊາດ.

ນະໂຍບາຍຂອງລັດຕໍ່ກັບວຽກງານສົ່ງເສີມການລົງທຶນໄດ້ສະແດງໃຫ້ເຫັນຢ່າງຈະແຈ້ງດັ່ງນີ້:

• ລັດສົ່ງເສີມທຸກພາກສ່ວນເສດຖະກິດພາຍໃນປະເທດ ລົງທຶນເຂົ້າໃນການຜະລິດ, ທຸລະກິດ ແລະ ການບໍລິການ ປະກອບສ່ວນເຂົ້າໃນການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ເຮັດໃຫ້ເສດຖະກິດແຫ່ງຊາດເຕີບໃຫຍ່ເຂັ້ມແຂງ.

• ລັດສົ່ງເສີມການລົງທຶນຂອງຕ່າງປະເທດ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສ້າງສິ່ງແວດລ້ອມ , ອຳນວຍຄວາມສະດວກໃຫ້ແກ່ການນຳເອົາທຶນ, ເຕັກໂນໂລຊີ, ນະວັດຕະກຳ ແລະ ການຄຸ້ມຄອງທີ່ກ້າວໜ້າ ເຂົ້າສູ່ຂະບວນການຜະລິດ, ທຸລະກິດ ແລະ ການບໍລິການ.

• ຊັບສິນບັດ ແລະ ທຶນທີ່ຖືກຕ້ອງຕາມກົດໝາຍຂອງຜູ້ລົງທຶນ ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ຈະບໍ່ຖືກເກັບເກນ, ຈະບໍ່ຖືກຍຶດ ຫຼື ໂອນເປັນຂອງລັດ.

• ລັດປົກປ້ອງ ແລະ ເສີມຂະຫຍາຍບັນດາຮູບການກຳມະສິດຂອງລັດ, ລວມໝູ່, ເອກະເທດ, ເອກະຊົນພາຍ ໃນ ແລະ ຕ່າງປະເທດ ທີ່ລົງທຶນຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຜູ້ລົງທຶນ ຢູ່ ສປປ ລາວ ນອກຈາກໄດ້ຮັບນະໂຍບາຍສົ່ງເສີມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນກ່ຽວກັບນະໂຍບາຍສົ່ງເສີມກິດຈະການຕາມຂະແໜງການ ແລະ ມາດຕາ 11 ນະໂຍບາຍດ້ານອາກອນກຳໄລໃນກິດຈະການຕາມຂະແໜງການ ແລະ ເຂດຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ມາດຕາ 12 ກິດຈະການທີ່ຖືກຍົກເວັ້ນອາກອນມູນຄ່າເພີ່ມຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມແລ້ວ ຍັງຈະໄດ້ຮັບນະໂຍບາຍດ້ານພາສີອາກອນດັ່ງນີ້:

• ການນຳເຂົ້າວັດຖຸອຸປະກອນທີ່ບໍ່ສາມາດສະໜອງ ຫຼື ຜະລິດໄດ້ໃນ ສປປ ລາວ ເພື່ອເປັນຊັບສິນບັດຄົງທີ່ ແລະ ພາຫະນະກົນຈັກຮັບໃຊ້ການຜະລິດໂດຍກົງ ຈະໄດ້ຮັບການຍົກເວັ້ນພາສີ ແລະ ອາກອນມູນຄ່າເພີ່ມ; ສ່ວນການນຳເຂົ້ານ້ຳມັນເຊື້ອໄຟ, ອາຍແກັສ, ນ້ຳມັນຫຼໍ່ລື່ນ, ພາຫະນະຮັບໃຊ້ບໍລິຫານ ແລະ ວັດຖຸປະກອນອື່ນໃຫ້ປະຕິບັດຕາມກົດໝາຍກ່ຽວຂ້ອງ, ສຳລັບການນຳເຂົ້າຊົ່ວຄາວ ພາຫະນະກົນຈັກ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍພາສີ;

• ການນຳເຂົ້າວັດຖຸດິບ, ແຮ່ທາດ, ວັດຖຸປະກອນ ແລະ ຊິ້ນສ່ວນປະກອນທີ່ຮັບໃຊ້ການຜະລິດເພື່ອສົ່ງອອກ ຈະໄດ້ຮັບການຍົກເວັ້ນພາສີ ແລະ ອາກອນມູນຄ່າເພີ່ມ ໃນກໍລະນີສິນຄ້າດັ່ງກ່າວບໍ່ສົ່ງອອກໃຫ້ເກັບພາສີ, ອາກອນຕາມກົດໝາຍທີ່ກ່ຽວຂ້ອງກຳນົດ;

• ການນຳໃຊ້ວັດຖຸດິບ, ວັດຖຸປະກອນ ແລະ ຊິ້ນສ່ວນປະກອບຢູ່ພາຍໃນທີ່ຮັບໃຊ້ການຜະລິດເປັນຜະລິດຕະພັນສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ ເພື່ອສົ່ງອອກ ຖືກຍົກເວັ້ນອາກອນມູນຄ່າເພີ່ມ, ສຳລັບການສົ່ງອອກວັດຖຸດິບ ແລະ ຜະລິດຕະພັນຈາກແຮ່ທາດໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ, ລັດຖະບານເປັນຜູ້ກຳນົດບັນຊີລາຍການຜະລິດຕະພັນເຄິ່ງສຳເລັດຮູບເພື່ອສົ່ງອອກ.

ລັດຖະບານລາວໄດ້ມີນະໂຍບາຍສ້າງ ເຂດເສດຖະກິດພິເສດມີກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ວິສາຫະກິດ, ແຮງງານ ແລະ ອື່ນໆ ສປປ ລາວ ແມ່ນໄດ້ຮັບລະບົບສິດທິພິເສດທາງການຄ້າ ແລະ ທົ່ວໄປ (GSP) ຈາກຫຼາຍກວ່າ 40 ປະເທດ.

ສປປ ລາວ ຍັງມີນະໂຍບາຍທາງດ້ານອາກອນໃຫ້ແກ່ຜູ້ລົງທຶນ ເຊັ່ນ: ການຍົກເວັ້ນອາກອນ, ອາກອນມື້ພັກ, ຍົກເວັ້ນອາກອນນຳເຂົ້າສຳລັບບາງວັດຖຸດິບທີ່ຈະຖືກຜະລິດ ແລະ ສົ່ງອອກ ຫຼື ບໍ່ມີອາກອນສຳລັບສົ່ງອອກ.

ເງື່ອນໄຂການໃຫ້ນະໂຍບາຍສົ່ງເສີມທາງດ້ານການລົງທຶນປະກອບມີຫຼາຍດ້ານ ແຕ່ຫຼັກໆແມ່ນທາງດ້ານອາກອນ ເຊິ່ງຂຶ້ນກັບເຂດສົ່ງເສີມການລົງທຶນ ແລະ ກິດຈະການສົ່ງເສີມການລົງທຶນ ໂດຍນະໂຍບາຍທາງດ້ານອາກອນນັ້ນໄດ້ແບ່ງອອກເປັນ 3 ເຂດ ແລະ 3 ລະດັບຄື: ເຂດທີ I: ເຂດພູດອຍ, ພູພຽງ ທີ່ບໍ່ມີໂຄງລ່າງພື້ນຖານທາງດ້ານເສດຖະກິດ ເພື່ອສ້າງສິ່ງອຳນວຍຄວາມສະດວກຂຶ້ນ; ເຂດທີ II: ເຂດພູດອຍ, ພູພຽງ ທີ່ມີໂຄງລ່າງພື້ນຖານທາງດ້ານເສດຖະກິດໃນ

ລະດັບປານກາງ ທີ່ເອື້ອອໍານວຍຄວາມສະດວກໃຫ້ແກ່ການລົງທຶນ ແລະ ເຂດທີ III: ເຂດພູພຽງ ທີ່ມີໂຄງລ່າງພື້ນຖານທາງດ້ານເສດຖະກິດດີ ທີ່ເອື້ອອໍານວຍຄວາມສະດວກໃຫ້ແກ່ການລົງທຶນ.

**(ແຜນທີ່ເຂດທີ່ໄດ້ຮັບການສົ່ງເສີມການລົງທຶນໃນ ສປປ ລາວ)**




## References:


1. ລັດຖະທໍາມະນູນຖະທໍາມະນູນແຫ່ງ ສປປ ລາວ, ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015;
2. ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນປີ 2009;
3. ກົດໝາຍຍວ່າດ້ວຍການສົ່ງເສີມການລົງທຶນປີ 2016;
4. ກົດໝາຍວ່າດ້ວຍການປັບປຸງມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນສະບັບປັບປຸງປີ 2016, ສະບັບເລກທີ 80/ສພຊ, ລົງວັນທີ 4 ທັນວາ 2019;
5. ລັດຖະດໍາລັດຂອງປະທານປະເທດ ແຫ່ງ ສປປ ລາວ, ສະບັບເລກທີ 033/ປປທ, ລົງວັນທີ 15 ມັງກອນ 2020 ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການປັບປຸງມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນສະບັບປັບປຸງປີ 2016;
6. ດໍາລັດຂອງນາຍົກລັດຖະມົນຕີ ເລກທີ 201/ນຍ, ລົງວັນທີ 30 ມີຖຸນາ 2017.